ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະການລົງທຶນ

ຫ້ອງການ

ເລກທີ 1557 /ກຜທ.ກຮມ-ຈສກ.02

ນະຄອນຫລວງວຽງຈັນ, ວັນທີ 03 ພຶດສະພາ 2024

## ໜັງສືເຊີນ

**ຮຽນ:** ທ່ານ ຫົວໜ້າຫ້ອງການ ກະຊວງແຜນການ ແລະ ການລົງທຶນ

**ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມເຜີຍແຜ່ ທິດຊີ້ນຳຜົນຂະຫຍາຍຜົນຂອງກອງປະຊຸມໂຕະມົນ ປະຈຳປີ 2023 ພາຍໃຕ້ຫົວຂໍ້ "ເລັ່ງລັດການຈັດຕັ້ງປະຕິບັດຜົນການທົບທວນກາງສະໄໝຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ ແລະ ຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ຂອງ ສປປ ລາວ".**

- ອີງຕາມ ດຳລັດ ວ່າດ້ວຍການຄຸ້ມຄອງ ແລະນຳໃຊ້ການຊ່ວຍເຫຼືອທາງການ ເພື່ອການພັດທະນາ ສະບັບເລກທີ 357/ລບ, ລົງວັນທີ 09 ຕຸລາ 2019;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງຫ້ອງການ ກະຊວງແຜນການ ແລະການລົງທຶນ ສະບັບເລກທີ 0234/ກຜທ, ລົງວັນທີ 02 ກຸມພາ 2022;
- ອີງຕາມ ແຜນວຽກຂອງ ຂະບວນການໂຕະມົນ ປະຈຳປີ 2024.

ຫ້ອງການ, ກະຊວງແຜນການ ແລະ ການລົງທຶນ ຂໍຖືເປັນກຽດຮຽນເຊີນທ່ານເຂົ້າຮ່ວມ ກອງປະຊຸມເຜີຍແຜ່ ທິດຊີ້ນຳຜົນຂະຫຍາຍຜົນຂອງ ກອງປະຊຸມໂຕະມົນ ປະຈຳປີ 2023 ພາຍໃຕ້ຫົວຂໍ້: "ເລັ່ງລັດການຈັດຕັ້ງປະຕິບັດຜົນການທົບທວນກາງສະໄໝຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ ແລະ ຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ຂອງ ສປປ ລາວ".

**ຈຸດປະສົງຂອງກອງປະຊຸມ:** (1) ເພື່ອປຶກສາຫາລື ກ່ຽວກັບການຈັດຕັ້ງຜົນຂະຫຍາຍຜົນ ກອງປະຊຸມໂຕະມົນ ປະຈຳປີ 2023; (2) ເພື່ອຖອດຖອນບົດຮຽນໃນການຈັດຕັ້ງປະຕິບັດວຽກງານຂະບວນການໂຕະມົນໃນປີຜ່ານມາເຊັ່ນ: ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ສິ່ງທ້າທາຍ, ຂໍ້ສະເໜີຕ່າງໆ; (3) ເພື່ອປຶກສາຫາລື ໃນການກະກຽມໃຫ້ແກ່ ກອງປະຊຸມໂຕະມົນ ປະຈຳປີ 2024 *(ລາຍລະອຽດແມ່ນໄດ້ຄັດຕິດມາພ້ອມນີ້).*

- **ວັນທີ:** 11 - 12 ມິຖຸນາ 2024 **ເວລາ:** 08:30 - 16:00 ໂມງ
- **ສະຖານທີ່:** ໂຮງແຮມ ບໍລິສະຫາວັນ ແຂວງ ສະຫວັນນະເຂດ

ຫວັງຢ່າງຍິ່ງວ່າ ທ່ານຄົງຈະສະຫຼະເວລາເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ດ້ວຍ.

**ຫົວໜ້າຫ້ອງການ**

ອຸຕະແກ້ວ ແກ້ວດວງສິນ

ຕິດຕໍ່:
- ນ. ຈຸລີ ໂທ: 020 56935769,
- ນ. ພັດສະກອນ ໄຊ່ນຫຼວງລາດ ໂທ: 20 2803 0272